| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ ສະຖານີລົດຂົນສົ່ງ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| VCPG-PWTD-14 | 12.01.2018 | ພະແນກໂຍທາທິການ ແລະ ຂົນສົ່ງ, ນະຄອນຫລວງວຽງຈັນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄຳຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | H - ການຂົນສົ່ງ ແລະ ສາງສິນຄ້າ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ສະຖານີລົດຂົນສົ່ງແມ່ນຈຸດສຸມໃນການຂົນສົ່ງທັງສິນຄ້າ ແລະ ຜູ້ໂດຍສານ ຊຶ່ງຖືເປັນໜຶ່ງໃນໂຄງລ່າງພື້ນຖານທີ່ສຳຄັນ ຈຶ່ງມີຄວາມຈຳເປັນຕ້ອງຮັບປະກັນ ແລະ ຄຸ້ມຄອງໃຫ້ໄດ້ມາດຕະຖານ ແລະ ຄຸນະພາບ ເພື່ອຮັບປະກັນຜົນປະໂຫຍດໃນການໃຊ້ບໍລິການຂອງສາທາລະນະ ລວມທັງການຫລຸດຜ່ອນຄວາມສ່ຽງໃນການຂົນສົ່ງ ແລະ ການສົ່ງຜ່ານສິນຄ້າ ແລະ ໂດຍສານ ທີ່ອາດເກີດຂຶ້ນທີ່ສະຖານີດັ່ງກ່າວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນກິດຈະການ ສະຖານີລົດຂົນສົ່ງ ຄື: ສະຖານທີ່ບໍລິການຮັບ-ສົ່ງຜູ້ໂດຍສານ, ວັດຖຸເຄື່ອງຂອງ ຫຼື ສັດ ທັງພາຍໃນປະເທດ, ລະຫວ່າງປະເທດ ແລະ ຜ່ານແດນ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄຳຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄຳເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ ແມ່ນເປັນຜູ້ອອກອະນຸຍາດ ແຕ່ກໍລະນີວິສາຫະກິດ ທີ່ແມ່ນການລົງທຶນຂອງຕ່າງປະເທດ 100% ຫຼື ວິສາຫະກິດຂົນສົ່ງລະຫວ່າງປະເທດ ແລະ ຜ່ານແດນ ແມ່ນກະຊວງຕ້ອງໄດ້ເຫັນດີເສຍກ່ອນ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ** | 30 | ພາຍຫຼັງໄດ້ຮັບເອກະສານຕ່າງໆ ຕ້ອງພິຈາລະນາ ອອກໃບອະນຸຍາດສ້າງຕັ້ງວິສາຫະກິດສະຖານີລົດຂົນສົ່ງກ່ອນ ແລະ ພາຍຫຼັງກໍ່ສ້າງສະຖານີສໍາເລັດ ແລະ ຜ່ານການກວດກາຂອງຄະນະກໍາມະການທີ່ກ່ຽວຂ້ອງແລ້ວ ຈະອອກໃບອະນຸຍາດດໍາເນີນທຸລະກິດໃຫ້ |
| **ຄຸນະສົມບັດຂອງຜູ້ຂໍໃບ ອະນຸຍາດ** | 1. ຜູ້ບໍລິຫານມີປະສົບການຄຸ້ມຄອງທຸລະກິດມາແລ້ວ ຢ່າງໜ້ອຍ 5 ປີ. 2. ຕ້ອງມີວິຊາການຂົນສົ່ງຊັ້ນສູງຂຶ້ນໄປ ກວມ 20% ຂອງຈໍານວນພົນທັງໝົດ, ນໍາໃຊ້ວິຊາການຄົນລາວ ແລະ ປະສົບການຢ່າງໜ້ອຍ 2 ປີ. 3. ຕ້ອງມີທຶນຈົດທະບຽນຢ່າງໜ້ອຍ 5 ຕື້ກີບຂຶ້ນໄປ, ສໍາຫຼັບ ການບໍລິການພາຍໃນປະເທດ ຫຼື 10 ຕື້ກີບຂຶ້ນໄປ ສໍາຫຼັບ ບໍລິການລະຫວ່າງປະເທດ ແລະ ຜ່ານແດນ. 4. ຖ້າແມ່ນການລົງທຶນຂອງຕ່າງປະເທດຕ້ອງເປັນວິສາຫະກິດປະສົມ ລະຫວ່າງຜູ້ຖືຮຸ້ນລົງທຶນພາຍໃນຕ້ອງຖືຮຸ້ນຫຼາຍກວ່າ 50% ຂອງທຶນທັງໝົດ ແລະ ອໍານາດຄຸ້ມຄອງທຸລະກິດຫຼາຍກວ່າ 5. ຕ້ອງມີເງື່ອນໄຂ ແລະ ມາດຕະຖານລວມ ທີ່ກໍານົດໄວ້ ສໍາລັບ ສະຖານີຂົນສົ່ງແຕ່ລະປະເພດ ແລະ ຂະໜາດ ຕາມທີ່ກໍານົດໄວ້ໃນ ຂໍ້ກໍານົດ ເລກທີ 4088/ຄຂປກ, ລົງວັນທີ 14 ທັນວາ 2000 | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍ ໃບອະນຸຍາດ?** | ປະຕິເສດກໍລະນີທີ່ ຜູ້ຮ້ອງຂໍບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂ ແລະ ຄຸນສົມບັດທີ່ລະບຸໄວ້ໃນ ກົດໝາຍ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບ ອະນຸຍາດ** | ອາຍຸຂອງໃບອະນຸຍາດແມ່ນ 12 ເດືອນຕາມປະຕິທິນ, ຊຶ່ງຈະໝົດອາຍຸ ພາຍໃນວັນທີ 31 ທັນວາ ຂອງທຸກໆປີ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື** | **ຄ່າບໍລິການວິຊາ ການ** | **ຄ່າທໍານຽມ** | **ຄ່າ ແບບຟອມ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທໍານຽມ | | | | |
|---|---|---|---|---|
| ບໍ່? | | | ຄໍາຮ້ອງ | |
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |
| ຄໍາເຫັນ | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 003/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |
| ຄໍາເຫັນ | ອີງຕາມລັດຖະບັນຍັດປະທານປະເທດ ເລກທີ 003/ປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ແຈ້ງການປະກອບຄໍາເຫັນຕໍ່ຮ່າງແຈ້ງການກ່ຽວກັບ ບັນຊີ ແລະ ເງື່ອນໄຂການລົງທຶນໃນຂະແໜງຂົນສົ່ງ | 12059/ກຂສ | 24.09.2008 | |
| ຂໍ້ກໍານົດກ່ຽວກັບການອະນຸຍາດ ສ້າງຕັ້ງວິສາຫະກິດສະຖານີຂົນສົ່ງ | 4088/ຄຂປກ | 14.12.2000 | |
| ລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມ ໃນຂະແໜງໂຍທາທິການ ແລະ ຂົນສົ່ງ | 13779/ຍທຂ | 21.08.2015 | |
| ກົດໝາຍວ່າດ້ວຍ ຂົນສົ່ງທາງບົກ (ສະບັບປັບປຸງ) | 24/ສພຊ | 12.12.2012 | ພາກທີ III : ການດໍາເນີນທຸລະກິດກ່ຽວກັບການຂົນສົ່ງທາງບົກ ມາດຕາ 23 ຫາ ມາດຕາ 27 |

| ເອກະສານປະກອບ |
|---|
| ຊື່ເອກະສານ |

| ເອກະສານປະກອບ |
|---|
| ບົດລາຍງານການເຄື່ອນໄຫວທຸລະກິດ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |
| ຮູບຖ່າຍຂອງອໍານວຍການ |
| ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 0 | 4 |
| 2017 | 0 | 4 |